ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຊຽງຂວາງ
ພະແນກອຸດສາຫະກຳ ແລະ ການຄ້າ
(ຄະນະກຳມະການປະມູນຂາຍໄມ້ຢຶດ)

ເລກທີ...1532...../ອຄ.ຊຂ
ຊຽງຂວາງ, ວັນທີ...13...ກ.ນ...2018

# ໜັງສືເຊີນ

**ເຖິງ:** ສະມາຄົມອຸດສາຫະກາປຸງແຕ່ງໄມ້ແຫ່ງຊາດ, ບັນດາໂຮງງານປຸງແຕ່ງໄມ້, ທຸລະກິດໄມ້ ໃນຂອບເຂດທົ່ວປະເທດ.
**ເລື່ອງ:** ເຊີນເຂົ້າຮ່ວມປະມູນຊື້ໄມ້ (ຮ່ອງໄມ້ຢຶດຂອງແຂວງຊຽງຂວາງ).

- ອີງຕາມ ຂໍ້ຕົກລົງຂອງທ່ານເຈົ້າແຂວງຊຽງຂວາງ ສະບັບເລກທີ 297/ຈຂ.ຊຂ, ລົງວັນທີ 27/4/2017, ວ່າດ້ວຍການແຕ່ງຕັ້ງຄະນະກຳມະການປະມູນຂາຍໄມ້ຢຶດຂອງລັດແຂວງຊຽງຂວາງ.
- ອີງຕາມ ຂໍ້ຕົກລົງຂອງທ່ານເຈົ້າແຂວງຊຽງ ສະບັບເລກທີ 1091/ຈຂ.ຊຂ, ລົງວັນທີ 26/12/2017, ສະບັບເລກທີ 1047/ຈຂ.ຊຂ ລົງວັນທີ 7 ທັນວາ 2017 ແລະ ສະບັບເລກທີ 429/ຈຂ.ຊຂ, ລົງວັນທີ 22/05/2018.
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 368/ຫສນຍ.ກລຂ, ລົງວັນທີ 15/03/2018.

ພະແນກອຸດສາຫະກຳ ແລະ ການຄ້າແຂວງ (ຄະນະຊີ້ນຳການປະມູນຂາຍໄມ້ຢຶດຂັ້ນແຂວງ) ຂໍຖືເປັນກຽດເຊີນມາຍັງບັນດາສະມາຄົມອຸດສາຫະກຳປຸງແຕ່ງໄມ້ສຳເລັດຮູບແຫ່ງຊາດ, ສະມາຄົມເຟີນີເຈີລາວ, ບັນດາໂຮງງານປຸງແຕ່ງໄມ້, ທຸລະກິດໄມ້ໃນຂອບເຂດທົ່ວປະເທດ ເພື່ອເຂົ້າຮ່ວມປະມູນຊື້ໄມ້ຢຶດຂອງແຂວງຊຽງຂວາງ ລາຍລະອຽດມີດັ່ງລຸ່ມນີ້:

1. ໄມ້ຢຶດຂອງແຂວງຊຽງຂວາງ ຈຳນວນ 3 ຮ່ອງ:
- ໄມ້ຄຸ້ມຄອງ 1,2,3 ຈຳນວນ 623 ທ່ອນ, ບໍລິມາດ 1.264,640 ແມັດກ້ອນ. (ໜຶ່ງພັນສອງຮ້ອຍຫົກສິບສີ່ຈຸດຫົກສີ່ສູນແມັດກ້ອນ) ທີ່ຢຶດຢູ່ສະໜາມ 2 ບ້ານລົ້ງຈອງ ແລະ ບ້ານລອງຮາງ ເມືອງພູກູດ ຮອບທີ V.
- ໄມ້ຄຸ້ມຄອງ 1,2,3 ຈຳນວນ 129,418 ແມັດກ້ອນ (ໜຶ່ງຮ້ອຍຊາວເກົ້າຈຸດສີ່ໜຶ່ງແປດ ແມັດກ້ອນ) ທີ່ຢຶດຢູ່ເມືອງຜາໄຊ ຮອບທີ I.
- ໄມ້ຄຸ້ມຄອງ 1,2,3 ຈຳນວນ 275,312 ແມັດກ້ອນ (ສອງຮ້ອຍເຈັດສິບຫ້າຈຸດສາມໜຶ່ງສອງແມັດກ້ອນ) ທີ່ຢຶດຢູ່ໂຮງງານປຸງແຕ່ງໄມ້ ຮົ່ງຫັ່ງວ ເມືອງ ຄູນ ຮອບທີ IV.

2. ການປະມູນຂາຍໄມ້ໃນຄັ້ງນີ້ ແມ່ນຈະເຮັດເປັນແບບຂາຍຍົກທັງໝົດບາດດຽວຕາມບັນຊີລາຍການໄມ້ (ຜູ້ຊື້ບໍ່ສາມາດເລືອກເອົາ ຫຼື ແຍກເອົາໄມ້ຕາມໃຈມັກຂອງຕົນເອງ)
3. ຜູ້ທີ່ສົນໃຈໃຫ້ມາຟົວພັນຊື້ຊອງປະມູນໄດ້ທີ່ ພະແນກອຸດສາຫະກຳ ແລະ ການຄ້າແຂວງຊຽງຂວາງ (ຂະແໜງການຄ້າພາຍໃນ, ຄະນະກຳມະການປະມູນຂາຍໄມ້ຢຶດຂອງລັດແຂວງຊຽງຂວາງ) ໃນໂມງລັດຖະການ ກຳນົດ 10 ວັນ **(ນັບແຕ່ວັນທີ 18/9/2018 ຫາ ວັນທີ 28/09/2018)**.

4. ກະລຸນາຖືຊອງປະມູນໄວ້ກັບຕົນເອງ ຈົນຮອດເວລາ 8:30 ໂມງ ຂອງວັນທີ 28/09/2018 ຈຶ່ງມາຢື່ນຊອງປະມູນ ໃຫ້ຄະນະກຳມະການປະມູນຂາຍໄມ້ຢືດຂອງລັດຂັ້ນແຂວງ ຢູ່ທີ່ຫ້ອງປະຊຸມໃຫ່ຍພະແນກອຸດສາຫະກຳ ແລະ ການຄ້າ ແຂວງຊຽງຂວາງ ຖ້າກາຍກຳນົດເວລາດັ່ງກ່າວ ຖືວ່າສະຫຼະສິດ
5. ມື້ເປີດຊອງປະມູນແມ່ນວັນທີ 28/09/2018, ເວລາ 8:30 ໂມງ ຢູ່ທີ **ຫ້ອງປະຊຸມໃຫ່ຍພະແນກອຸດສາຫະກຳ ແລະ ການຄ້າ ແຂວງຊຽງຂວາງ.**
6. ລາຄາຊອງປະມູນແມ່ນ 1.000.000 ກີບ/ຊອງ (ສຳລັບຄ່າຊອງປະມູນແມ່ນບໍ່ໄດ້ສົ່ງຄືນ).
7. ເງື່ອນໄຂ ຂອງຜູ້ເຂົ້າຮ່ວມການປະມູນ: ຕ້ອງເປັນໂຮງງານປຸງແຕ່ງໄມ້ ຫຼື ໂຮງງານເຟີນີເຈີຢູ່ ສປປ ລາວ ທີ່ມີທະບຽນວິສາຫະກິດ, ໃບທະບຽນອາກອນ, ໃບອະນຸຍາດດຳເນີນທຸລະກິດດ້ານການຜະລິດ ແລະ ປຸງແຕ່ງໄມ້ທີ່ຖືກຕ້ອງຕາມລະບຽບກົດໝາຍ, ມີໃບຢັ້ງຢືນຖານະການເງິນຢູ່ ສປປ ລາວ ບໍ່ເກີນ 10 ວັນ ທີ່ມີມູນຄ່າບໍ່ຕ່ຳກ່ວາມູນຄ່າຊະນະການປະມູນ, ມີປະຫວັດການດຳເນີນທຸລະກິດທີ່ຈະແຈ້ງ.
8. ຜູ້ຊະນະການປະມູນ ຕ້ອງໄດ້ຈ່າຍເງິນຄ້ຳປະກັນ 10% ຂອງມູນຄ່າຊະນະການປະມູນ ພາຍໃນກຳນົດເວລາ 5 ວັນ ນັບແຕ່ມື້ເປີດຊອງປະມູນເປັນຕົ້ນໄປ, ສ່ວນທີ່ຍັງເຫຼືອ ໃຫ້ຊຳລະສຳເລັດພາຍໃນກຳນົດເວລາ 15 ວັນ ນັບແຕ່ມື້ເຮັດສັນຍາຊື້-ຂາຍບຳລັດ ແລະ ໄດ້ຈົດທະບຽນຊັບສິນສຳເລັດ.
9. ຜູ້ທີ່ມີຄວາມສົນໃຈເຂົ້າຮ່ວມປະມູນ ໃຫ້ປະສານນຳຄະນະກຳມະການປະມູນຂາຍໄມ້ຢືດແຂວງຊຽງຂວາງ ໂທ: 020 23833332 ຫຼື 020 96064888

ດັ່ງນັ້ນ,ຈຶ່ງເຊີນມາຍັງບັນດາທ່ານເພື່ອເຂົ້າຮ່ວມປະມູນຊື້ໄມ້ຢືດ ຕາມກຳນົດເວລາຂ້າງເທິງດ້ວຍ.

ຫົວໜ້າພະແນກ
(ຄະນະກຳມະການປະມູນຂາຍໄມ້ຢືດ)

ທອງສະຫວັດ ມັງໜໍ່ເມກ
Thongsavath MANGNOMEK